**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

*********

# ພາລະບົດບາດ
# ໜ່ວຍງານວິຊາການຕ້ານເຊື້ອເອດສໄອວີ ແລະ ພະຍາດເອດ

ໂດຍ

ຄະນະກຳມະການ ປະສານງານ ກອງທຶນໂລກ

2015

## I. ປະຫັວດຄວາມເປັນມາ:

ໃນການການສະກັດກັ້ນ ແລະ ຕ້ານການແພ່ລະບາດ ຂອງເຊື້ອເຮສໄອວີ, ລັດຖະບານ ສປປ ລາວ ໄດ້ໃຫ້ຄໍາໝັ້ນສັນຍາ ຢ່າງໜັກແໜ້ນ ທາງດ້ານການເມືອງ ໃນການໃຫ້ການສະໜັບສະໜູນ ການສະກັດກັ້ນ ແລະ ຕ້ານການແພ່ລະບາດ ຂອງເຊື້ອເຮສໄອວີ/ພະຍາດເອດໂດຍການມີສ່ວນຮ່ວມ ຂອງຫຼາຍພາກ ສ່ວນ. ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມງານພາຍໃນ ແມ່ນມີບົດບາດຢ່າງຫຼວງຫຼາຍ ໃນການປະສານງານ ແລະ ເຮັດໃຫ້ການຮ່ວມມືດີຂຶ້ນ ພາຍຫຼັງທີ່ມີການປະກາດ ຮັບຮອງເອົາຖະແຫຼງການຄົ້ງປະຖົມມະເລີກ ໃນກອງປະຊຸມ ສະມັດ ຊາໃຫ່ຍສະຫະປະຊາຊາດວາລະພິເສດກ່ຽວກັບພະຍາດເອດໃນປີ 2001 ແລະ ໃນໄລຍະຕໍ່ມາ ໄດ້ຮັບຮອງເອົາຖະແຫຼງການທາງດ້ານການເມືອງ 2011 ຊຶ່ງຈັດຂຶ້ນໃນ ເດືອນ ມີຖຸນາ ປີ 2011.

ຄະນະກໍາມະການດ້ານວິຊາການ 3 ຄະນະ ໄດ້ຖືກຈັດຕັ້ງຂຶ້ນ ໃນກາງປີ 2007 ໂດຍ ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສໍາພັນ ໃນການກຽມພ້ອມເພື່ອຮັບມື ແລະ ຂະຫຍາຍຕາໜ່າງການປິ່ນປົວ ART, ກິດຈະກໍາ ພາກສະໜາມຂອງສາວບໍລິການ ແລະ ຊາຍຮ່ວມເພດກັບຊາຍ. ຄະນະກໍາມະການ ທາງດ້ານວິຊາການເຫຼົ່ານີ້ ແມ່ນປະກອບດ້ວຍຕົວແທນວິຊາການທີ່ມາຈາກກົມກອງຕ່າງໆ ຂອງກະຊວງ ສາທາລະນະສຸກ, ສູນວິເຄາະ-ລະບາດວິທະຍາ, ສູນຂ່າວສານການແພດ, ໂຮງໝໍມະໂຫສົດ ແລະ ເສດຖາທິລາດ, ຄະນະກໍາມະການຕ້ານເອດ ນະຄອນຫຼວງວຽງຈັນ, ອົງການສະຫະປະຊາຊາດ, ອົງການ ຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs), ອົງການ ຈັດຕັ້ງທ້ອງຖິ່ນ ແລະ ຄູ່ຮ່ວມງານອື່ນໆ.

ຫຼັງຈາກນັ້ນ ໜ່ວຍງານວິຊາການ ຕ້ານເຊື້ອເຮດໄອວີ ແລະ ພະຍາດເອດ, ທີ່ປະກອບດ້ວຍ ຜູ້ຕາງໜ້າຈາກກະຊວງສາທາລະນະສຸກ ໄດ້ຖືກຈັດຕັ້ງຂຶ້ນໃນເດືອນ ພຶດສະພາ ປີ 2011 ໂດຍ ມີຈຸດປະສົງເພື່ອສະໜອງ ແລະ ປະກອບຄໍາຄິດເຫັນ ໃນການພັດທະນາ ບົດສະເໜີໂຄງການແຫ່ງຊາດ ເພື່ອຍື່ນຂໍທຶນຈາກກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ (ກທລອວຂ) ໃນການໃຫ້ທຶນຊ່ວຍ ເຫຼືອຮອບທີ່ 11. ຫຼັງຈາກນັ້ນ ໜ່ວຍງານວິຊາການນີ້ ໄດ້ມີການປະຊຸມແບບວິສາມັນຢ່າງຕໍ່ເນື່ອງ ເຊິ່ງໄດ້ເຊີນເອົາແຕ່ລະພາກສ່ວນກ່ຽວຂ້ອງເຂົ້າຮ່ວມເຊັ່ນ: ຜູ່ຮັບທຶນຫລັກ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ໂດຍສະ ເພາະແມ່ນຜູ່ຮັບທຶນຍ່ອຍຂອງໂຄງການ ກທລອວຂ. ການສ້າງຕັ້ງຂຶ້ນຢ່າງເປັນທາງການ ຂອງໜ່ວຍງານວິຊາການ ຕ້ານເຊື້ອເຮດໄອວີ ແລະ ພະຍາດເອດ ເປັນສິ່ງທີ່ຈໍາເປັນໃນປະຈຸບັນ ເພື່ອຮັບ ປະກັນວ່າແຜນການແຫ່ງຊາດ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນ ລະບົບ ແລະ ມີປະສິດທິຜົນ.

ຄະນະກໍາມະການ ປະສານງານ ແຫ່ງຊາດ (CCM) ໄດ້ຮັບການສະໜັບສະໜູນຈາກກອງທຶນໂລກ ເພື່ອຕ້ານກັບ 3 ພະຍາດ (ເຮສໄອວີ/ເອດ, ວັນນະໂລກ, ໄຂ້ຍຸງ) ເພື່ອຊຸກຍູ້ລັດຖະບານ ໃຫ້ສືບຕໍ່ຄວາມພະ ຍາຍາມ. ໜຶ່ງໃນຄວາມຮຽກຮ້ອງຕ້ອງການ ແມ່ນໃຫ້ມີການຈັດຕັ້ງໜ່ວຍງານ ທາງ ດ້ານວິຊາການ ເພື່ອຕິດຕາມກວດກາໂຄງການໂດຍມີຜູ່ຕາງໜ້າຈາກຫລາຍພາກສ່ວນ ທີ່ມີອິດທິພົນໃນການມີສ່ວນຮ່ວມທີ່ສໍາຄັນຕໍ່ການໃຫ້ການສະໜັບສະໜູນທາງດ້ານ ວິຊາການ ດ້ວຍການໃຫ້ຄໍາແນະ ນໍາໃນການຈັດຕັ້ງປະຕິບັດໂຄງການ ເພື່ອຄວບຄຸມແລະຈໍາກັດເຊື້ອເຮສໄອວີແລະພະຍາດເອດໃນ ສປປ ລາວ ໃຫ້ມີປະສິດທິຜົນ.

## II. ຈຸດປະສົງ

ຈຸດປະສົງຕົ້ນຕໍ ຂອງໜ່ວຍງານວິຊາການ ຕ້ານເຊື້ອເຮສໄອວີ ແລະ ພະຍາດເອດ ທີ່ມີຕົວຫຍໍ້ແມ່ນ TFHIV, ຈະຊ່ວຍໃຫ້ກະຊວງສາທາລະນະສຸກ ບັນລຸເປົ້າໝາຍ ຍຸດທະສາດ, ແຜນງານແຫ່ງຊາດໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ຮັບປະກັນການຈັດຕັ້ງປະຕິບັດ ຢ່າງເປັນລະບົບ ແລະ ມີປະສິດທິພາບຂອງແຜນງານແຫ່ງຊາດຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ພະຍາດຕິດຕໍ່ ທາງເພດສໍາພັນ.

## III. ພາລະກິດ:

1. ສົ່ງເສີມການເຊື່ອມໂຍງ/ການຮ່ວມມືຂອງຫຼາຍຂະແໜງການ ໃນການສະກັດກັ້ນ ແລະ ຕ້ານ ເຊື້ອເຮສໄອວີ /ພະຍາດເອດ;
2. ເສີມຂະຫຍາຍການຮ່ວມມືພາຍໃນປະເທດ, ຕ່າງປະເທດ ແລະ ການພົວພັນກັບສາກົນ;
3. ສົ່ງເສີມການສົນທະນາກ່ຽວກັບນະໂຍບາຍ ແລະ ອຳນວຍຄວາມສະດວກໃນການກຳນົດທົ່ວໄປໃນບ່ອນທີ່ເຫັນວ່າມີຄວາມເໝາະສົມ.

## IV. ຍຸດທະສາດ:

1. ສ້າງຄວາມເຂັ້ມແຂງ ແລະ ເພີ່ມການຮ່ວມມືໃນລະດັບຊາດ ໃນການສະກັດກັ້ນ ແລະ ຕ້ານ ເຊື້ອເຮສໄອວີ/ ພະຍາດເອດ ເພື່ອຮັບປະກັນວ່າບັນຫາ ແລະ ຊ່ອງຫ່ວາງຕ່າງໆທີ່ສຳຄັນ ໄດ້ຖືກບັນຈຸເຂົ້າໃນແຜນວຽກງານລະດັບຊາດ.
2. ສົ່ງເສີມວຽກງານຂໍການສະໜັບສະໜູນ ແລະ ເສີມຂະຫຍາຍຄວາມຮັບຮູ້ ໃນລະດັບຊາດ ກ່ຽວກັບສະພາບການຂອງເຊື້ອເຮສໄອວີ ແລະ ພະຍາດເອດ ພ້ອມທັງບັນຫາຕ່າງໆທີ່ພົວພັນ;
3. ປັບປຸງການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ແລະ ພະຍາດຕິດຕໍ່ທາງເພດ ສຳພັນ;
4. ສ້າງຄວາມເຂັ້ມແຂງ ດ້ານຄວາມສາມາດໃນລະດັບຊາດ ໃນການແກ້ໄຂບັນຫາ ທີ່ກ່ຽວຂ້ອງກັບເຊື້ອເຮສໄອວີ/ພະຍາດເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ ແລະ ຜົນສະທ້ອນຕໍ່ສຸຂະພາບ ຈາກການເຊື່ອມໂຍງຂອງເສດຖະກິດຢູ່ໃນພາກພື້ນ, ໂລກາວິວັດ, ການຄ້າເສລີ, ເຕັກໂນໂລຊີ ແລະ ນະວັດທະກຳທີ່ທັນສະໃໝ.

## V. ຂອບເຂດຂອງການເຮັດວຽກ:

ເພື່ອໃຫ້ສອດຄ່ອງກັບຈຸດປະສົງ ແລະ ຍຸດທະສາດ ທີ່ກ່າວມາຂ້າງເທິງນັ້ນ, ການເຮັດວຽກຂອງໜ່ວຍງານວິຊາການ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຈະຕ້ອງປະຕິບັດຕາມພາລະບົດບາດຂ້າງລຸ່ມນີ້:

1. ເພື່ອສ້າງ ແລະ ໃຫ້ຄຳແນະນຳແກ່ໂຄງການແຫ່ງຊາດ ໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ ພະຍາດເອດ ກ່ຽວກັບນະໂຍບາຍ, ຍຸດທະສາດ, ຂໍ້ແນະນຳ, ຄູ່ມື ແລະ ແຜນງານແຫ່ງຊາດ ໃນການສະດກັ້ນ ແລະ ຕ້ານເຊື້ອເຮສໄອວີ ແລະ ພະຍາດເອດ;
2. ເພື່ອຢັ້ງຢືນເຖິງຄວາມຄືບໜ້າ, ຜົນສຳເລັດຂອງແຜນຍຸດທະສາດ ແລະ ແຜນງານແຫ່ງຊາດ ໂດຍການປະກອບຄຳຄິດຄຳເຫັນ, ໃຫ້ການຊ່ວຍເຫຼືອໃນການວາງແຜນການ, ຂໍ້ສະເໜີແນະໂດຍອີງການ, ການຈັດຕັ້ງ ແລະ ສະຖາບັນ ທີ່ເຮັດວຽກກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ແລະ ພະຍາດຕິດຕໍ່ ທາງເພດສຳພັນ;
3. ເພື່ອກຳນົດການຈັດວາງໃນລະດັບຊາດ ຕໍ່ກັບບັນຫາທີ່ກ່ຽວຂ້ອງກັບ ເຊື້ອເຮສໄອວີ ແລະ ພະຍາດ ເອດ, ໂດຍສະເພາະຢ່າງຍິ່ງ ແມ່ນການພັດທະນາ ບົດລາຍງານ/ເອກະສານ ລະດັບຊາດທີ່ກ່ຽວຂ້ອງກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ເພື່ອກະກຽມການປະຊຸມ/ ກອງ ປະຊຸມສາກົນ;
4. ເພື່ອສົ່ງເສີມການເຊື່ອມໂຍງລະຫວ່າງຂະແໜງການ ກັບບັນດາກະຊວງທີ່ກ່ຽວຂ້ອງ, ຄູ່ຮ່ວມງານພາຍໃນ ແລະ ສາກົນ ໂດຍຜ່ານສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ, ກະຊວງສາທາ ລະນະສຸກ;
5. ເສີມຂະຫຍາຍເຄືອຄ່າຍເຮສໄອວີ ແລະ ພະຍາດເອດ ຂອງສະຖາບັນສາທາລະນະສຸກ, ວິຊາການດ້ານສາທາລະນະສຸກສາດ, ໃນການສິດສອນ ແລະ ເຮັດການຄົ້ນຄວ້າກ່ຽວກັບເຊື້ອເຮສໄອວີ/ພະຍາດ ເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ;
6. ເສີມຂະຫຍາຍບົດບາດໃນການປູກຈິດສຳນຶກ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນງານແຫ່ງຊາດ, ໂດຍມີເປົ້າໝາຍໃສ່ຂັ້ນລະດັບການນຳ ຂອງຂະແໜງການສາທາລະນະສຸກ, ວິຊາການດ້ານສາທາລະນະສຸກສາດ, ຄູ່ຮ່ວມງານ ແລະ ຜູ້ນຳທາງດ້ານການເມືອງ ໂດຍຜ່ານຫຼາຍຊ່ອງທາງເຊັ່ນ: ກອງປະຊຸມ ທາງດ້ານສາທາລະນະສຸກລະດັບຊາດ, ການສຳມະນາ ທາງດ້ານວິທະຍາສາດ, ເຄືອຄ່າຍຂອງສື່ມວນຊົນ ແລະ ສ່ວນບຸກຄົນ;

7. ປະກອບຄຳຄິດຄຳເຫັນ ໃສ່ເອກະສານຕ່າງໆ ທີ່ຈະສົ່ງໃຫ້ຄະນະກຳມະການກວດກາ/ຄະນະກຳມະການປະສານງານ ກອງທຶນໂລກ ເພື່ອພິຈາລະນາ.

## VI. ຂະບວນການ / ກົນໄກ

1. ສະມາຊິກຖາວອນຂອງ ໜ່ວຍງານວິຊາການຕ້ານເຊື້ອເຮສໄອວີແລະພະຍາດເອດ ແມ່ນຜູ້ຕາງ ໜ້າທີ່ໄດ້ຖືກຄັດເລືອກຈາກກົມກອງ ແລະ ສະຖາບັນ ຂອງກະຊວງສາທາລະນະສຸກເຊັ່ນ: ກົມຄວບ ຄຸມພະຍາດຕິດຕໍ່, ກົມປິ່ນປົວ, ກົມອາຫານ ແລະ ຢາ, ກົມອະນາໄມ-ສົ່ງເສີມສຸຂະພາບ, ກົມແຜນ ການ ແລະ ຮ່ວມມືສາກົນ, ກົມກວດກາ, ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ, ສູນວິ ເຄາະ-ລະບາດວິທະຍາ, ສູນວັນນະໂລກ, ສູນແມ່ ແລະ ເດັກ, ສູນຂ່າວສານການແພດ, ແລະ ຫ້ອງ ການຜູ້ຮັບທຶນຕົ້ນຕໍຂອງກອງທຶນໂລກ. ອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ຈະໄດ້ຮັບການເຊື້ອເຊີນໃຫ້ເຂົ້າມາຮ່ວມໃນກອງປະຊຸມສາມັນ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ເຊັ່ນ: UNAIDS, UNICEF, UNODC, WHO, Burnet, IOM, LaoPHA, NCA, PEDA, PSI, LRC, ເຄືອຄ່າຍ PLHIV. ກະຊວງຕ່າງໆ ແລະ ຜູ່ປະສານງານ ຂອງຄະນະກຳມະການແຫ່ງຊາດຕ້ານເອດ ກໍ່ຈະໄດ້ຮັບ ການເຊີນ ຖ້າເຫັນວ່າຈຳເປັນ. ຖ້າເຫັນວ່າມີຄວາມຈຳເປັນ ໜ່ວຍງານວິຊາການຕ້ານເຊື້ອເຮສໄອວີ ສາມາດພິຈາລະນາວ່າອົງການຈັດຕັ້ງໃດສາມາດເຂົ້າຮ່ວມປະຊຸມຢ່າງເປັນປົກະຕິນຳໄດ້.
2. ໜ່ວຍງານວິຊາການຕ້ານເຊື້ອເຮສໄອວີ ຄວນຈະປະຊຸມປະຈຳໄຕມາດ. ແລະ ສາມາດຈັດຕັ້ງກອງປະຊຸມວິສາມັນ ແລະ ຮຽກປະຊຸມດ່ວນໄດ້ ຫາກເຫັນວ່າມີຄວາມຈຳເປັນ.
3. ຫົວໜ້າສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສາພັນ, ກະຊວງສາທາລະນະສຸກ ຄວນຈະເປັນປະທານຂອງ ໜ່ວຍງານວິຊາການຕ້ານເຊື້ອເຮສໄອວີ ແລະ ຮັບຜິດຊອບໃນການຈັດປະຊຸມ ແລະ ລາຍງານໃຫ້ກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ.
4. ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ, ກະຊວງສາທາລະນະສຸກ ຄວນຈະເປັນ ກອງເລຂາຂອງໜ່ວຍງານວິຊາການຕ້ານເຊື້ອເຮສໄອວີ. ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ ຈະເປັນຜູ້ສົ່ງບັດເຊີນ, ກະກຽມເອກະສານຂອງກອງປະຊຸມ, ລາຍການຂອງກອງປະຊຸມ, ບັນທຶກກອງປະຊຸມ ແລະ ກະກຽມບົດລາຍງານຜົນຂອງກອງປະຊຸມ ແລະ ຮັບຜິດຊອບທາງດ້ານການ ບໍລິຫານຕ່າງໆສຳລັບໜ່ວຍງານ.

*********

# ຕົວອັກສອນຫຍໍ້

| | |
|---|---|
| Burnet | ສະຖາບັນເບີເນັດ |
| CCM | ຄະນະກຳມະການ ປະສານງານ ກອງທຶນໂລກ |
| CHAS | ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ |
| CLE | ສູນວິເຄາະ ແລະ ລະບາດວິທະຍາ |
| FSW | ສາວບໍລິການ |
| GFATM | ກອງທຶນໂລກ ຕ້ານເອດ, ວັນນະໂລກ ແລະ ມາລາເລຍ |
| IOM | ອົງການສາກົນຄຸ້ມຄອງຄົນຕ່າງດ້າວ |
| Lao PHA | ສະມາຄົມ ຜູ້ຕິດເຊື້ອ ໃນລາວ |
| LRC | ອົງການກາແດງລາວ |
| LYU | ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ |
| MCH Centre | ສູນແມ່ ແລະ ເດັກ |
| MSM | ຜູ້ຊາຍທີ່ມີເພດສຳພັນກັບຜູ້ຊາຍ |
| NCA | ທຶນຊ່ວຍເຫຼືອ ຂອງຄຣິດຕະຈັກນໍເວ |
| NCCA | ຄະນະກຳມະການແຫ່ງຊາດຕ້ານເອດ |
| NGOs | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| NSAP | ແຜນຍຸດທະສາດ ແລະ ແຜນງານແຫ່ງຊາດ |
| OC | ຄະນະກຳມະການກວດກາ |
| PCCA-Vientiane Capital | ຄະນະກຳມະການ ຕ້ານເອດ ນະຄອນຫລວງວຽງຈັນ |
| PEDA | ສະມາຄົມສົ່ງເສີມ ພັດທະນາການສຶກສາ |
| PLHIV | ຜູ້ທີ່ຕິດເຊື້ອເອດ |
| PSI | ອົງການສາກົນເພື່ອການບໍລິການປະຊາຊົນ |
| TFHIV | ໜ່ວຍງານວິຊາການ ຕ້ານເຮສໄອວີ/ພະຍາດເອດ |
| TWG | ຄະນະກຳມະການດ້ານວິຊາການ |
| UN | ອົງການສະຫະປະຊາຊາດ |
| UNAIDS | ໂຄງການຕ້ານເອດຂອງອົງການສະຫະປະຊາຊາດ |
| UNICEF | ກອງທຶນຊ່ວຍເຫລືອເດັກຂອງອົງການສະຫະປະຊາຊາດ |
| UNODC | ຫ້ອງການອົງການສະຫະປະຊາຊາດ ຕ້ານຢາເສບຕິ ແລະ ອາສະຍາກຳ |
| WHO | ອົງການອະນາໄມໂລກ |